


# ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ (BCEL) ຮ່ວມກັບ ບໍລິສັດ ຫຼັກຊັບ ທຄຕລ-ກທ (BCEL-KT) ຈັດງານເປີດໂຕລະບົບຊື້ຂາຍຮຸ້ນ ຜ່ານມືຖື (Mobile Trading System -MTS) ຜ່ານ BCEL One ຢ່າງເປັນທາງການ








## ໃນຕອນບ່າຍ, ວັນພະຫັດ, ວັນທີ 02 ຕຸລາ 2025

ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ (BCEL) ຮ່ວມກັບ ບໍລິສັດ ຫຼັກຊັບ ທຄຕລ-ກທ (**BCEL-KT**) ໄດ້ຈັດພິທີເປີດໂຕລະບົບຊື້ຂາຍຮຸ້ນຜ່ານມືຖື (Mobile Trading System -MTS) ຜ່ານ BCEL One ຢ່າງເປັນທາງການ ເຊິ່ງພິທີດັ່ງກ່າວໄດ້ຈັດຂຶ້ນ ເວລາ 15:00 ໂມງ ຢູ່ທີ່ ໂຮງແຮມ ສຸພັດຕຣາ ນະຄອນຫຼວງວຽງຈັນ.



ໃຫ້ກຽດເຂົ້າຮ່ວມງານໃນຄັ້ງນີ້ ມີ **ທ່ານ ສຸລິວັດ ສຸວັນນະຈູມຄຳ, ຮອງລັດຖະມົນຕີ ກະຊວງການເງິນ - ປະທານສະພາບໍລິຫານ ທຄຕລ ແລະ ທ່ານ ສຸລິສັກ ທຳນຸວົງ ຮອງຜູ້ວ່າການທະນາຄານແຫ່ງ ສປປ ລາວ** ພ້ອມດ້ວຍຜູ້ຕາງໜ້າຈາກສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ, ຕະຫຼາດຫຼັກຊັບລາວ, ສະມາຊິກສະພາບໍລິຫານ ທຄຕລ, ບັນດາບໍລິສັດຫຼັກຊັບ, ຜູ້ຖືຮຸ້ນ ທຄຕລ, ນັກລົງທຶນທັງພາຍໃນ ແລະ ຕ່າງປະເທດ ຕະຫຼອດເຖິງບັນດາລູກຄ້າຂອງສອງພາກສ່ວນ, ພ້ອມດ້ວຍສື່ມວນຊົນ ກໍ່ໄດ້ເຂົ້າຮ່ວມຢ່າງພ້ອມພຽງ.

ໃນໄລຍະປີ 2024 ທີ່ຜ່ານມາ, ທາງ BCEL ແລະ BCEL-KT ໄດ້ເລີ່ມຮ່ວມມືກັນພັດທະນາລະບົບ MTS ໂດຍມີເປົ້າໝາຍຫຼັກ ຄື:

1) ການສັ່ງຊື້-ຂາຍທັນທີ, ອະນຸຍາດໃຫ້ລູກຄ້າ ແລະ ນັກລົງທຶນສາມາດສົ່ງຄຳສັ່ງຊື້-ຂາຍ ຮຸ້ນໄດ້ດ້ວຍຕົນເອງ ແບບ Real-Time ຜ່ານແອັບ BCEL One;

2) ລູກຄ້າສາມາດກວດສອບຂໍ້ມູນບັນຊີຮຸ້ນຂອງຕົນເອງໄດ້ຕະຫຼອດເວລາ ໂດຍບໍ່ຈຳເປັນຕ້ອງໂທຫາບໍລິສັດຫຼັກຊັບ ຫຼື ເຂົ້າໂປຣແກຣມຜ່ານຄອມພິວເຕີແບບເດີມ;

3) ກະຕຸ້ນການລົງທຶນ ແລະ ຊຸກຍູ້ການຊື້-ຂາຍຮຸ້ນ ຂອງນັກລົງທຶນ ທັງພາຍໃນ-ຕ່າງປະເທດ ໃນຕະຫຼາດຫຼັກຊັບລາວ.

**ທ່ານ ນ. ສາຍສະໝອນ ຈັນທະຈັກ, ຜູ້ອຳນວຍການ BCEL** ໄດ້ລາຍງານວ່າ ການພັດທະນາລະບົບດັ່ງກ່າວ ໄດ້ນຳໃຊ້ບຸກຄະລາກອນຂອງ BCEL ເຊິ່ງເປັນຄົນລາວ ທີ່ເປັນມືຄວາມຊ່ຽວຊານໃນການພັດທະນາຟັງຊັ່ນຕ່າງໆ ຂອງ BCEL One ພ້ອມທັງເປັນການຢັ້ງຢືນເຖິງຄວາມສາມາດໃນການຄຸ້ມຄອງລະບົບດ້ວຍບຸກຄະລາກອນພາຍໃນຊາດ ແລະ ສາມາດຕໍ່ຍອດຜະລິດຕະພັນຕ່າງໆ ໄດ້ດ້ວຍຕົນເອງ. ໂດຍລະບົບ MTS ຈະເປັນ "ຕົວເລັ່ງ" ສຳຄັນ ໃຫ້ແກ່ການລົງທຶນໃນຕະຫຼາດທຶນລາວ ເຊິ່ງບໍ່ພຽງແຕ່ເປັນການເພີ່ມຊ່ອງທາງການຊື້-ຂາຍຮຸ້ນເທົ່ານັ້ນ, ແຕ່ຍັງເປັນການປະຕິຮູບຕະຫຼາດທຶນລາວ ໃຫ້ກ້າວສູ່ການເຂົ້າເຖິງດີຈີຕອນ, ການຊື້-ຂາຍແບບທັນທີ ແລະ ເປັນການສະໜັບສະໜູນແນວທາງນະໂຍບາຍຂອງພາກລັດໃນການຫັນສູ່ເສດຖະກິດດີຈີຕອນ.